ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ທະນາຄານແຫ່ງ ສປປ ລາວ

ກົມຈັດຕັ້ງແລະພະນັກງານ

ສຳນັກງານ ຄຄຊ
ຮັບ ເລກທີ 0409
ວັນທີ 18 APR 2017
ໂທລະສັບ 021 217770

ເລກທີ 58 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 11 APR 2017

# ແຈ້ງການ

**ຮຽນ:** ບັນດາທ່ານ ຫົວໜ້າກົມ-ທຽບເທົ່າ ແລະ ບັນດາສາຂາ ທຫລ ປະຈຳພາກ.

**ເລື່ອງ:** ການແຕ່ງກາຍຂອງພະນັກງານ ທຫລ.

- ອີງຕາມແຈ້ງການຂອງກົມຈັດຕັ້ງແລະພະນັກງານ ສະບັບເລກທີ 77/ກຈພ ລົງວັນທີ 19 ພຶດສະພາ 2010 ແລະ ສະບັບເລກທີ 151/ກຈພ ລົງວັນທີ 22 ເມສາ 2011;
- ອີງຕາມຂໍ້ຕົກລົງວ່າດ້ວຍ ການປະຕິບັດນະໂຍບາຍເງິນຕັດເຄື່ອງແບບໃຫ້ພະນັກງານ ທຫລ ປະຈາປີ 2017 ສະບັບເລກທີ 257/ທຫລ ລົງວັນທີ 17 ມີນາ 2017;
- ອີງໃສ່ຄວາມເປັນເອກະພາບໃນກອງປະຊຸມລະຫວ່າງ ຫ້ອງການ, ກົມຈັດຕັ້ງແລະພະນັກງານ, ກົມກວດກາພາຍໃນ ແລະ ສາມອົງການຈັດຕັ້ງມະຫາຊົນ ຂັ້ນຮາກຖານ ທຫລ ຄັ້ງວັນທີ 4 ເມສາ 2017.

ເພື່ອຄວາມເປັນເອກະພາບ ແລະ ຄວາມເປັນລະບຽບຮຽບຮ້ອຍ-ຈົບງາມ ໃນການແຕ່ງກາຍຂອງພະນັກງານ ທຫລ ນັບແຕ່ຂັ້ນຫົວໜ້າພະແນກ ແລະ ທຽບເທົ່າລົງມາ ໃນເວລາປະຈຳການ, ກົມຈັດຕັ້ງແລະພະນັກງານ ຈຶ່ງຖືເປັນກຽດແຈ້ງມາຍັງທ່ານ ເພື່ອຊາບ ແລະ ຊີ້ນຳການຈັດຕັ້ງປະຕິບັດການແຕ່ງກາຍຂອງພະນັກງານດັ່ງກ່າວ ຄືດັ່ງນີ້:

**I. ຮູບແບບ ແລະ ສີຂອງເຄື່ອງແບບ:**

**1. ເພດຊາຍ:**

- ເສື້ອຄໍເຊີດແຂນຍາວ, ສີຂາວ ແລະ ສີຟ້າອ່ອນ;
- ໂສ້ງສີກົມມະທາດ ຫຼື ສີດຳ ຮູບຊົງແບບສຸພາບ ແລະ ມີກີບ, ປາຍຂອງຂາໂສ້ງບໍ່ນ້ອຍ ຫຼື ໃຫຍ່ຈົນເກີນໄປ (ລະຫວ່າງ 21-25 ຊມ);
- ເກີບສີດຳ ຫຼື ສີນ້ຳຕານເຂັ້ມ, ປາຍຂອງເກີບບໍ່ຍາວ ຫຼື ແຫຼມຈົນເກີນໄປ;
- ກາລະວັດ: ສີມືດ ຫຼື ສີທີ່ບໍ່ແຈ້ງ-ເດັ່ນເກີນຂອບເຂດ ໃຫ້ໃສ່ໃນເວລາປະຈຳການ (ຍົກເວັ້ນພະນັກງານທີ່ປະຕິບັດໜ້າທີ່ຢູ່ຄັງສາງ ຫຼື ຂົງເຂດການຜະລິດ), ເຂົ້າຮ່ວມກອງປະຊຸມ-ສຳມະນາ ແລະ ເນື່ອງໃນໂອກາດພິທີທາງການຕ່າງໆ; ສຳລັບຊ່ວງໄລຍະເດືອນມີນາ ເຖິງ ເດືອນກໍລະກົດ ເນື່ອງຈາກມີອາກາດທີ່ຮ້ອນ-ອົບເອົ້າ ແມ່ນໃຫ້ໃສ່ກາລະວັດຕາມຄວາມເໝາະສົມ;
- ແຂວນບັດພະນັກງານ.

**2. ເພດຍິງ:**

- ເສື້ອຄໍເຊີດ ຫຼື ຄໍຮາວາຍ, ແຂນຍາວ ຫຼື ແຂນສີ່ສ່ວນ (ຊີ່ງແຂນກະບອກ), ສີໄຂ່ອ່ອນ ແລະ ສີຟ້າອ່ອນ; ຮູບແບບ ໃຫ້ຕັດລຽບ (ບໍ່ຍົກບ່າ ແລະ ບໍ່ແຈກຫຼັງ-ຂ້າງ);

- ສິ້ນສີແດງກາງ ແລະ ສີກົມມະທາດ, ບໍ່ມີຈຸດດອກ, ຕີນສິ້ນບໍ່ໃຫຍ່ ຫຼື ນ້ອຍຈົນເກີນໄປ (ລະຫວ່າງ 13-15 ຊມ), ບໍ່ເປັນແອວລອຍ ແລະ ບໍ່ເຂີນ ຫຼື ລ່າມເກີນໄປ;

- ເກີບສີດຳ ຫຼື ສີນ້ຳຕານເຂັ້ມ (ແບບກັດຊູ, ຮັດສົ້ນ ແລະ ຊົງດານ), ສົ້ນເກີບບໍ່ໃຫ້ສູງເກີນໄປ;

- ແຂວນບັດພະນັກງານ.

**II. ການນຸ່ງຖືຕົວຈິງ:**

**1. ວັນຈັນ, ພຸດ ແລະ ສຸກ:**

- ເພດຊາຍ: ໃສ່ເສື້ອສີຂາວ ແລະ ໂສ້ງສີດຳ ຫຼື ສີກົມມະທາດ;
- ເພດຍິງ: ໃສ່ເສື້ອສີໄຂ່ອ່ອນ ແລະ ສິ້ນສີແດງກາງ.

**2. ວັນອັງຄານ ແລະ ພະຫັດ:**

- ເພດຊາຍ: ໃສ່ເສື້ອສີຟ້າອ່ອນ ແລະ ໂສ້ງສີດຳ ຫຼື ສີກົມມະທາດ;
- ເພດຍິງ: ໃສ່ເສື້ອສີຟ້າອ່ອນ ແລະ ສິ້ນສີກົມມະທາດ.

ສຳລັບພະນັກງານຜູ້ທີ່ເຮັດວຽກງານກວດກາ, ຄູສອນຂອງ ສທຄ ແລະ ສະມາຊິກຂອງແຕ່ລະອົງການຈັດຕັ້ງມະຫາຊົນ ແມ່ນໃຫ້ປະຕິບັດຕາມແຈ້ງຂອງພາກສ່ວນກ່ຽວຂ້ອງ ໃນແຕ່ລະໄລຍະ (ສຳລັບສະມາຊິກຊາວໜຸ່ມເພດຍິງ ໃນເວລານຸ່ງເສື້ອຊາວໜຸ່ມ ໃຫ້ນຸ່ງສິ້ນສີກົມມະທາດ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ເປັນເຈົ້າການຊີ້ນຳການຈັດຕັ້ງປະຕິບັດຕົວຈິງ ຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຄັ່ງຄັດດ້ວຍ.

**ຫົວໜ້າກົມຈັດຕັ້ງແລະພະນັກງານ**

ພານຸສັກ ແກ່ນວົງພະຈັນ